ຂ່າວ NEWS
ພະແນກຄົ້ນຄວ້າຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

ກອງປະຊຸມເຜີຍແຜ່ກ່ຽວກັບການສ້າງນິຕິກຳຂອງ ທະນາຄານແຫ່ງ ສປປ ລາວ

ໃນວັນທີ 13 ພຶດສະພາ 2025 ນີ້, ທີ່ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດກອງກອງປະຊຸມເຜີຍແຜ່ກ່ຽວກັບການສ້າງນິຕິກຳຂອງ ທຫລ ຂຶ້ນ ໂດຍການໃຫ້ກຽດເປັນປະທານຂອງ ທ່ານ ພານຸສັກ ແກ່ນວິງພະຈັນ, ຫົວໜ້າ ຫ້ອງການ ທຫລ ໂດຍມີຄະນະກົມ, ຄະນະພະແນກ ແລະ ວິຊາການ ຈາກບັນດາກົມພາຍໃນ ທຫລ ເຂົ້າຮ່ວມຈຳນວນ 73 ທ່ານ.

ຈຸດປະສົງຂອງການຈັດກອງປະຊຸມເຜີຍແຜ່ໃນຄັ້ງນີ້ ກໍເພື່ອໃຫ້ບັນດາພາກສ່ວນກ່ຽວຂ້ອງຮັບຮູ້ ແລະ ເຂົ້າໃຈ ຢ່າງເອກະພາບ ແລະ ຈັດຕັ້ງປະຕິບັດວຽກງານການສ້າງນິຕິກຳ ໃຫ້ມີຄວາມຄົບຖ້ວນທາງດ້ານເນື້ອໃນ ແລະ ໂຄງສ້າງທີ່ຖືກຕ້ອງ ກັບຫຼັກການ. ສຳລັບຫົວຂໍ້ທີ່ເຜີຍແຜ່ຄັ້ງນີ້ມີ ຄື: ① ຂໍ້ຕົກລົງວ່າດ້ວຍການສ້າງນິຕິກຳຂອງ ທຫລ; ② ຄຳແນະນຳກ່ຽວກັບ ເຕັກນິກການສ້າງນິຕິກຳຂອງຜູ້ວ່າການ ແລະ ຫົວໜ້າກົມ ແລະ ການແນະນຳກ່ຽວກັບການສ້າງເອກະສານທີ່ກ່ຽວຂ້ອງກັບ ການສ້າງນິຕິກຳ ໂດຍສະເພາະປະເພດນິຕິກຳ, ຂັ້ນຕອນການສ້າງນິຕິກຳ, ການປະເມີນຜົນການຈັດຕັ້ງປະຕິບັດນິຕິກຳ ແລະ ③ ການຍົກເລີກນິຕິກຳ. ເພື່ອແນໃສ່ເຮັດໃຫ້ບັນດາກົມ ແລະ ອົງການລັດທຽບເທົ່າກົມພາຍໃນ ທຫລ ເຫັນໄດ້ເຖິງຄວາມ ສຳຄັນ ແລະ ຄວາມຈຳເປັນໃນການສ້າງນິຕິກຳດັ່ງກ່າວພ້ອມທັງຮັບຮູ້, ເຂົ້າໃຈຢ່າງເປັນເອກະພາບກັນ ແລະ ສາມາດນຳໄປ ໝູນໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານສ້າງນິຕິກຳທີ່ຕິດພັນກັບຄວາມຮັບຜິດຊອບຂອງຕົນ ໃຫ້ມີປະສິດທິຜົນສູງສຸດ, ຊຶ່ງການບັນຍາຍໃນຄັ້ງນີ້ໂດຍແມ່ນ ທ່ານ ກິແກ້ວ ແສນທະວີສຸກ ຮອງຫົວໜ້າຫ້ອງການ ທຫລ ພ້ອມດ້ວຍຄະນະ.

ກອງປະຊຸມດັ່ງກ່າວ ໄດ້ດຳເນີນໄປເປັນເວລາ 1 ວັນເຕັມ ຊຶ່ງຜູ້ເຂົ້າຮ່ວມໄດ້ມີການສົນທະນາແລກປ່ຽນຄຳຄິດເຫັນ ດ້ວຍບັນຍາກາດຟົດຟື້ນເຮັດໃຫ້ກອງປະຊຸມເຜີຍແຜ່ວຽກງານດັ່ງກ່າວບັນລຸໝາກຜົນຕາມຈຸດປະສົງ ແລະ ລະດັບຄາດໝາຍ ທີ່ວາງໄວ້ເປັນຢ່າງດີ.

ຂ່າວ-ພາບ: ຫ້ອງການທະນາຄານແຫ່ງ ສປປ ລາວ.

ຢູ່ເມືອງລາວໃຊ້ເງິນກີບລາວ